ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 846/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 20 ກັນຍາ 2018

# ຂໍ້ຕົກລົງ

## ວ່າດ້ວຍຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງປະຈຳປີ ຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 3 ຕຸລາ 2012;
- ອີງຕາມດຳລັດວ່າດ້ວຍການເຊົ່າສິນເຊື່ອ ສະບັບເລກທີ 11/ນຍ, ລົງວັນທີ 18 ກຸມພາ 1999;
- ອີງຕາມດຳລັດວ່າດ້ວຍທຸລະກິດຊວດຈຳ ສະບັບເລກທີ 248/ລບ, ລົງວັນທີ 26 ກໍລະກົດ 2016;
- ອີງຕາມຂໍ້ກຳນົດວ່າດ້ວຍການຄຸ້ມຄອງ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສະບັບເລກທີ 03/ທຫລ, ລົງວັນທີ 20 ມິຖຸນາ 2008;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມຄຸ້ມຄອງສະຖາບັນການເງິນ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງປະຈຳປີ ຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງທະນາຄານແຫ່ງ ສປປ ລາວ ເພື່ອເປັນບ່ອນອີງໃຫ້ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຈັດຕັ້ງປະຕິບັດໃຫ້ເປັນເອກະພາບກັນ.

**ມາດຕາ 2 ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແມ່ນຈຳນວນເງິນທີ່ ຜູ້ຂໍອະນຸຍາດດຳເນີນທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະ

ນາຄານ ຕ້ອງຊຳລະໃຫ້ ທະນາຄານແຫ່ງ ສປປ ລາວ ໃນເວລາຍື່ນສຳນວນເອກະສານຂໍອະນຸຍາດດຳເນີນທຸລະກິດ, ຂໍຂະຫຍາຍສາຂາ ແລະ ສະເໜີຂໍດັດແກ້ ຫຼື ເພີ່ມເຕີມບາງເງື່ອນໄຂໃນການດຳເນີນທຸລະກິດ.

ຄ່າບໍລິການ ແມ່ນຈຳນວນເງິນທີ່ ທະນາຄານແຫ່ງ ສປປ ລາວ ຮຽກເກັບກັບຜູ້ຂໍອະນຸຍາດດຳເນີນທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຊຶ່ງປະກອບດ້ວຍ ຄ່າບໍລິການຄົ້ນຄວ້າອອກອະນຸຍາດດຳເນີນທຸລະກິດ ແລະ ຂະຫຍາຍສາຂາ, ຄ່າລິຂະສິດໂປຣແກຣມບັນຊີ, ຄ່າບຳລຸງຮັກສາ ແລະ ຄ່າບໍລິການລົງແກ້ໄຂ ໂປຣແກຣມບັນຊີ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

### ມາດຕາ 3 ຄ່າຄຸ້ມຄອງປະຈຳປີ

ຄ່າຄຸ້ມຄອງປະຈຳປີ ແມ່ນຈຳນວນເງິນທີ່ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຕ້ອງຊຳລະໃຫ້ທະນາຄານ ແຫ່ງ ສປປ ລາວ ປະຈຳປີ. ຄ່າຄຸ້ມຄອງດັ່ງກ່າວ ແມ່ນຕິດພັນກັບການຄຸ້ມຄອງບໍລິຫານຄວາມສ່ຽງທາງດ້ານການ ວິເຄາະຖານະການເງິນ, ການກວດກາ, ການຊຸກຍູ້-ສົ່ງເສີມ ແລະ ພັດທະນາສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ ໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ.

### ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ທີ່ຂໍອະນຸຍາດດຳເນີນທຸລະກິດ ແລະ ສະຖາບັນການ ເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ຈາກ ທະນາຄານແຫ່ງ ສປປ ລາວ.

ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຊຶ່ງກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ປະກອບດ້ວຍ:

1. ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ;
2. ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ;
3. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
4. ໂຮງຊວດຈຳ;
5. ບໍລິສັດເຊົ່າສິນເຊື່ອ.

## ໝວດທີ 2
## ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງປະຈຳປີ ຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ

### ມາດຕາ 5 ຄ່າທຳນຽມ ແລະ ຄ່າບໍລິການ

ທະນາຄານແຫ່ງ ສປປ ລາວ ຈະເກັບຄ່າທຳນຽມ ແລະ ຄ່າບໍລິການ ຊຶ່ງປະກອບມີດັ່ງນີ້:

1. ຄ່າທຳນຽມຍື່ນເອກະສານ ຂໍອະນຸຍາດດຳເນີນທຸລະກິດສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ຂໍຂະຫຍາຍສາຂາ ແລະ ສະເໜີຂໍດັດແກ້ ຫຼື ເພີ່ມເຕີມບາງເງື່ອນໄຂໃນການດຳເນີນທຸລະກິດ ເຊັ່ນ: ການປ່ຽນແປງທຶນ, ການປ່ຽນແປງທີ່ຕັ້ງສຳນັກງານ, ການປ່ຽນແປງຂາຮຸ້ນ, ການຄວບກິດຈະການ, ການ

ໂອນ ຫຼື ຂາຍຮຸ້ນ, ການໂອນ ຫຼື ຂາຍກິດຈະການ ແລະ ອື່ນໆ ຕາມການກຳນົດຂອງ ທະນາຄານແຫ່ງ ສປປ ລາວ ແຕ່ລະໄລຍະ;

2. ຄ່າບໍລິການຄົ້ນຄວ້າອອກອະນຸຍາດ ດຳເນີນທຸລະກິດ ແລະ ຂະຫຍາຍສາຂາ;
3. ຄ່າລິຂະສິດ, ຄ່າບຳລຸງຮັກສາ ແລະ ຄ່າບໍລິການລົງແກ້ໄຂ ໂປຣແກຣມບັນຊີ.

**ມາດຕາ 6 ຄ່າທຳນຽມ ຍື່ນເອກະສານ**

ທະນາຄານແຫ່ງ ສປປ ລາວ ຈະເກັບຄ່າທຳນຽມຍື່ນເອກະສານ ຂໍອະນຸຍາດດຳເນີນທຸລະກິດສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ຂໍຂະຫຍາຍສາຂາ ແລະ ສະເໜີດັດແກ້ ຫຼື ເພີ່ມເຕີມບາງເງື່ອນໄຂໃນການດຳເນີນທຸລະກິດ ຈຳນວນ 500.000 (ຫ້າແສນ) ກີບ ຕໍ່ຄັ້ງ.

ຄ່າທຳນຽມຍື່ນເອກະສານດັ່ງກ່າວ ບໍ່ສາມາດຖອນຄືນໄດ້.

**ມາດຕາ 7 ຄ່າບໍລິການຄົ້ນຄວ້າອອກໃບອະນຸຍາດດຳເນີນທຸລະກິດ**

ພາຍຫຼັງທີ່ມີເງື່ອນໄຂໄດ້ຮັບໃບອະນຸຍາດດຳເນີນທຸລະກິດ, ທະນາຄານແຫ່ງ ສປປ ລາວ ຈະເກັບຄ່າບໍລິການຄົ້ນຄວ້າອອກໃບອະນຸຍາດດຳເນີນທຸລະກິດ ໃນອັດຕາ 0,5 ສ່ວນຮ້ອຍ ຂອງທຶນຈົດທະບຽນທັງໝົດ ຂອງແຕ່ລະຮູບແບບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ.

ຄ່າບໍລິການຄົ້ນຄວ້າເອກະສານຂະຫຍາຍສາຂາ ຂອງ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຈຳນວນ 1.000.000 (ໜຶ່ງລ້ານ) ກີບ ຕໍ່ ໜຶ່ງສາຂາ.

**ມາດຕາ 8 ຄ່າລິຂະສິດ, ຄ່າບຳລຸງຮັກສາ ແລະ ຄ່າບໍລິການລົງແກ້ໄຂ ໂປຣແກຣມບັນຊີ**

ທະນາຄານ ແຫ່ງ ສປປ ລາວ ຈະເກັບຄ່າລິຂະສິດ, ຄ່າບຳລຸງຮັກສາ ແລະ ຄ່າບໍລິການລົງແກ້ໄຂ ໂປຣແກຣມບັນຊີ ຕາມລາຍລະອຽດດັ່ງນີ້:

1. ຄ່າລິຂະສິດໂປຣແກຣມບັນຊີ ຈຳນວນ 5.000.000 (ຫ້າລ້ານ) ກີບ;
2. ຄ່າບຳລຸງຮັກສາໂປຣແກຣມບັນຊີປະຈຳປີ ຈຳນວນ 1.000.000 (ໜຶ່ງລ້ານ) ກີບ ຕໍ່ ປີ;
3. ຄ່າບໍລິການລົງແກ້ໄຂໂປຣແກຣມບັນຊີ ທີ່ເກີດຈາກຄວາມຜິດພາດຂອງຜູ້ນຳໃຊ້ໂປຣແກຣມບັນຊີ ແລະ ລະບົບບັນຊີ ຈຳນວນ 1.000.000 (ໜຶ່ງລ້ານ) ກີບ ຕໍ່ຄັ້ງ. ສຳລັບຄ່າເດີນທາງ, ອັດຕາກິນ ແລະ ທີ່ພັກ ຂອງພະນັກງານຈາກ ທະນາຄານແຫ່ງ ສປປ ລາວ ໃນການລົງແກ້ໄຂບັນຫາໂປຣແກຣມບັນຊີ ແມ່ນໃຫ້ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ເປັນຜູ້ຮັບຜິດຊອບຕາມລະບຽບການຂອງ ທະນາຄານແຫ່ງ ສປປ ລາວ.

**ມາດຕາ 9 ຄ່າຄຸ້ມຄອງປະຈຳປີ**

ທະນາຄານແຫ່ງ ສປປ ລາວ ເກັບຄ່າຄຸ້ມຄອງປະຈຳປີ ຈາກບັນດາສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໃນອັດຕາ 0,02 ສ່ວນຮ້ອຍ ຂອງຊັບສິນທັງໝົດໃນມື້ປິດບັນຊີທ້າຍປີ, ແຕ່ມູນຄ່າຕ່ຳສຸດບໍ່ໃຫ້ຫຼຸດ 1.500.000 (ໜຶ່ງລ້ານຫ້າແສນ) ກີບ.

ການເກັບຄ່າຄຸ້ມຄອງປະຈຳປີ ຂອງ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ຕັ້ງຢູ່ເຂດຕົວເມືອງທຸກຍາກຕາມການກຳນົດຂອງລັດຖະບານແຕ່ລະໄລຍະ ແມ່ນຂຶ້ນກັບການພິຈາລະນາຂອງ ທະນາຄານແຫ່ງ ສປປ ລາວ.

### ມາດຕາ 10 ວິທີການຊຳລະ ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງປະຈຳປີ

ການຊຳລະ ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງປະຈຳປີ ມີລາຍລະອຽດດັ່ງນີ້:

1. ຄ່າທຳນຽມ ຍື່ນເອກະສານ ຕ້ອງຊຳລະໃນວັນທີ່ຍື່ນສຳນວນເອກະສານຂໍອະນຸຍາດດຳເນີນທຸລະກິດ, ຂໍຂະຫຍາຍສາຂາ ແລະ ສະເໜີຂໍດັດແກ້ ຫຼື ເພີ່ມເຕີມບາງເງື່ອນໄຂໃນການດຳເນີນທຸລະກິດໃຫ້ທະນາຄານແຫ່ງ ສປປ ລາວ;
2. ຄ່າບໍລິການຄົ້ນຄວ້າອອກໃບອະນຸຍາດດຳເນີນທຸລະກິດ ແລະ ຂະຫຍາຍສາຂາ ຕ້ອງຊຳລະຕາມແຈ້ງການຂອງ ທະນາຄານແຫ່ງ ສປປ ລາວ ພາຍຫຼັງທີ່ມີເງື່ອນໄຂໄດ້ຮັບອະນຸຍາດ ດຳເນີນທຸລະກິດ ແລະ ຂະຫຍາຍສາຂາ;
3. ຄ່າລິຂະສິດ ແລະ ຄ່າບໍລິການລົງແກ້ໄຂໂປຣແກຣມບັນຊີ ຕ້ອງຊຳລະພາຍໃນ 05 ວັນລັດຖະການກ່ອນການລົງຕິດຕັ້ງ ແລະ ແກ້ໄຂໂປຣແກຣມບັນຊີ;
4. ຄ່າບຳລຸງຮັກສາໂປຣແກຣມບັນຊີ ແລະ ຄ່າຄຸ້ມຄອງປະຈຳປີ ຕ້ອງຊຳລະພາຍໃນໄຕມາດທີ 1 (ກ່ອນວັນທີ 01 ເມສາ) ຂອງປີການບັນຊີຖັດໄປ. ພາຍຫຼັງຊຳລະເປັນທີ່ຮຽບຮ້ອຍແລ້ວ ໃຫ້ລາຍງານຢ່າງເປັນລາຍລັກອັກສອນມາຍັງ ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ຫຼື ພະແນກຄຸ້ມຄອງສະຖາບັນການເງິນ, ສາຂາ ທະນາຄານແຫ່ງ ສປປ ລາວ ພາຍໃນ 05 ວັນລັດຖະການ.

ທຸກໆການຊຳລະ ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງປະຈຳປີ ໃຫ້ຊຳລະຢູ່ທີ່ ກົມບໍລິການທະນາຄານແຫ່ງ ສປປ ລາວ ຫຼື ພະແນກບໍລິການ-ບັນຊີ, ສາຂາ ທະນາຄານແຫ່ງ ສປປ ລາວ.

## ໝວດທີ 3
## ນະໂຍບາຍຕໍ່ກັບຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 11 ນະໂຍບາຍຕໍ່ຜູ້ມີຜົນງານ

ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຈະເປັນເງື່ອນໄຂໜຶ່ງໃນການພິຈາລະນາຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນໆ ຕາມລະບຽບການ.

### ມາດຕາ 12 ມາດຕະການຕໍ່ຜູ້ລະເມີດ

ຜູ້ຂໍອະນຸຍາດດຳເນີນທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ຈະຖືກປະຕິບັດມາດຕະການ ກ່າວເຕືອນ, ສຶກສາອົບຮົມ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຮັບຜິດຊອບທາງອາຍາ, ປັບໃໝ ແລະ ລົງວິໄນ ຕາມແຕ່ກໍລະນີ ເບົາ ຫຼື ໜັກ.

ກໍລະນີ ໄດ້ຮັບການແຈ້ງເຕືອນເປັນລາຍລັກອັກສອນຈາກ ທະນາຄານແຫ່ງ ສປປ ລາວ, ແຕ່ຍັງສືບຕໍ່ລະເມີດ ຈະຖືກປັບໃໝ 300.000 (ສາມແສນ) ກີບ ຕໍ່ ວັນ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 13 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຄຸ້ມຄອງສະຖາບັນການເງິນ ແລະ ສາຂາ ທະນາຄານແຫ່ງ ສປປ ລາວ ປະຈໍາພາກ ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ຜູ້ຂໍອະນຸຍາດດໍາເນີນທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 14 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ຂໍ້ຕົກລົງວ່າດ້ວຍຄ່າທໍານຽມ, ຄ່າບໍລິການໃນການຂໍອະນຸຍາດດໍາເນີນທຸລະກິດ ແລະ ຄ່າຄຸ້ມຄອງປະຈໍາປີ ຂອງສະຖາບັນການເງິນ ສະບັບເລກທີ 926/ທຫລ, ລົງວັນທີ 11 ພະຈິກ 2015.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຮັກສາການ ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ ລາວ
ຜູ້ວ່າການ

ສອນໄຊ ສິດພະໄຊ